# Happy Birthday Khanngeunh

ຂໍຟາກກອນ ເປັນຂອງຂວັນ ອັນລ້ຳເລີດ
ພອນວັນເກີດ ແດ່ຂັນເງິນ ເພີນສຸຂີ
ຢ່າມີທຸກ ອຸກກັງວົນ ຫມື່ນຣີດີ
ຊື່ນສຸຂີ ມີສຸຂສັນ ວັນເກີດນາງ

ຄອງຄວາມຮັກ ຄູ່ກັນມາ ຢ່າຄາດແຄ້ວ
ສຸຂແນ້ແລ້ວ ອຳມະຕະ ຢ່າເມີນຫມາງ
ຫມັ້ນຄົງຮັກ ປັກຊີວີ ມີຈືດຈາງ
ຮ່ວມເສັ້ນທາງ ເຖິງສຸດຍອດ ຕລອດໄປ

ຂໍໃຫ້ພົບ ສຸຂສົມຫວັງ ດັ່ງໃຈຄິດ
ມາກມວນມິດ ມີຫຼາຍລົ້ນ ຄືນຈິງໃຈ
ກຽດຕິດຍົດ ທັງຊື່ສຽງ ກ້ອງກຽງໄກ
ກ້າວຫນ້າໄປ ເຫມືອນວິຫົກ ນົກໂບຍບິນ

ຂໍໄຫວ້ວອນ ເທພເທວາ ອົງສັກສິດ
ເນຣະມິດ ມາກເງິນທອງ ກອງຊັພສິນ
ຂໍພອນຟ້າ ມາປະທານ ຜ່ານອົງອິນ

ຢ່າສູນສິ້ນ ລົ້ນຄວາມຮັກ ຄືນພັກດີ

ອວຍພອນຊັຍ ໃຫ້ຂັນເງິນ ເພີນສຸຂລົ້ນ
ສວັນບັນດົລ ພອນບັນດາລ ວັນສຸຂຂີ
ສຸຂພາບ ໃຫ້ແຂງແຮງ ໄປທັງປີ
ກອນບົດນີ້ ເປັນຄຳກອນ ພອນຈາກໃຈ

ຊື່ນສຸຂສັນ ຕລອດວັນ ຄ້າຍວັນເກີດ
ພອນປະເສີດ ໃນທົ່ວລ້າ ຟ້າສົດໃສ
ຂໍໃຫ້ເປັນ ນາງມະທີ ຢ່າງນີ້ໄປ
ມີຫົວໃຈ ລົ້ນປ່ຽມສຸຂ ທຸກວັນຄືນ.....

# !ສຸຂສັນວັນເກີດ!